**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ສຳນັກງານ ນາຍົກລັດຖະມົນຕີ
ອົງການ ຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ

ເລກທີ 1488 /ສນຍ-ອຊນສ
ນະຄອນຫຼວງວຽງຈັນ, ວັນທີ 10 OCT 2008

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງ ກອງ ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ອົງການ ຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ, ສະບັບເລກທີ 149/ນຍ, ລົງວັນທີ 10 ພຶດສະພາ 2007;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍ ການສ້າງຕັ້ງ ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ສະບັບເລກທີ 149/ນຍ, ລົງວັນທີ 21 ສິງຫາ 2008;
- ອີງຕາມ ການເຫັນດີຂອງຄະນະນຳ ອຊນສ ໂດຍຜ່ານການຮັບຮອງ ຂອງທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ.

## ລັດຖະມົນຕີ ປະຈຳສຳນັກງານນາຍົກລັດຖະມົນຕີ
## ຫົວໜ້າອົງການ ຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1: ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ຂອງ ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ.

**ມາດຕາ 2: ທີ່ຕັ້ງ ແລະ ພາລະບົດບາດ**

ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ເອີ້ນຫຍໍ້ວ່າ "ກປສສ" ແມ່ນການຈັດຕັ້ງ ລັດວິຊາການໜຶ່ງ ມີຖານະເທົ່າກົມ ສັງກັດໃນໂຄງປະກອບການຈັດຕັ້ງ ຂອງອົງການ ຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ (ອຊນສ), ສຳນັກງານນາຍົກລັດຖະມົນຕີ; ມີພາລະບົດບາດ ເປັນ

ເລຂາທິການ ໃຫ້ແກ່ ອຂບລ ໃນການທົບທວນ, ຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຂອງບັນດາໂຄງການລົງທຶນ ຂອງລັດ ແລະ ເອກະຊົນ(ຕໍ່ໄປເອີ້ນວ່າໂຄງການລົງທຶນ) ຕາມລະບຽບກົດໝາຍ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3: ໜ້າທີ່**

3.1. ຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ແລະ ບັນດານິຕິກຳ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;

3.2. ຈັດຕັ້ງການໂຄສະນາເຜີຍແຜ່, ຄົ້ນຄວ້າ ເຊື່ອມຊຶມ, ຝຶກອົບຮົມ ກ່ຽວກັບນິຕິກຳ ດ້ານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;

3.3. ສ້າງແຜນການ, ແຜນງົບປະມານ ແລະ ແຜນບຸກຄະລະກອນ ໃນແຕ່ລະໄລຍະ ພ້ອມທັງເອົາໃຈໃສ່ຄຸ້ມຄອງ, ຕິດຕາມກວດກາ, ປະເມີນຜົນການຈັດຕັ້ງປະຕິບັດ ແລະ ລາຍງານຂັ້ນເທິງ;

3.4. ເກັບ ແລະ ຄຸ້ມຄອງຄ່າທຳນຽມ, ຄ່າບໍລິການ ດ້ານສິ່ງແວດລ້ອມ-ສັງຄົມ ແລະ ປະຕິບັດພັນທະຕາມລະບຽບການ; ສ້າງແຜນການນຳໃຊ້ ລາຍຮັບວິຊາການ ໃນການເຄື່ອນໄຫວວຽກງານຂອງ ກປສສ ໃນແຕ່ລະໄລຍະ ແລ້ວນຳສະເໜີຂໍອະນຸມັດຕາມລະບຽບການ;

3.5. ຂື້ນແຜນກໍ່ສ້າງ, ບຳລຸງ ແລະ ຍົກລະດັບດ້ານວິຊາການ ໃນຂົງເຂດວຽກງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຂອງບັນດາໂຄງການລົງທຶນ ໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ;

3.6. ຄຸ້ມຄອງ, ຈັດວາງ ແລະ ນຳໃຊ້ພະນັກງານ ວິຊາການ ພາຍໃນກອງ ຕາມຕຳແໜ່ງງານໃຫ້ເໝາະສົມກັບຄວາມຮູ້ ຄວາມສາມາດຂອງແຕ່ລະຄົນ ໂດຍໃຫ້ສອດຄ່ອງ ກັບການຂະຫຍາຍຕົວ ຂອງວຽກງານໃນແຕ່ລະໄລຍະ;

3.7. ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ດຳເນີນງານຕາມຂັ້ນຕອນ ໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ກ້າວໄປເຖິງການຮັບຮອງເອົາ ບົດລາຍງານການປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຂອງບັນດາໂຄງການລົງທຶນ;

3.8 ຄົ້ນຄວ້າ ແລະ ນຳສະເໜີສ້າງຕັ້ງ ຄະນະຊ່ຽວຊານ ຫຼື ວ່າຈ້າງຊ່ຽວຊານ/ທີ່ປຶກສາ ຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອເຮັດໜ້າທີ່ ກວດຜ່ານບົດລາຍງານ ການປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການລົງທຶນຖ້າຈຳເປັນ;

3.9. ປະສານສົມທົບ ກັບບັນດາຂະແໜງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການພົບປະເຈລະຈາ ກັບຜູ້ພັດທະນາໂຄງການ ໃນໄລຍະຕ່າງໆ ຂອງຂະບວນການອອກໃບຢັ້ງຢືນ, ເຈລະຈາສັນຍາສຳປະທານ ແລະ ເຊັນເອກະສານທາງການ ຕາມການມອບໝາຍ ຂອງ ຂັ້ນເທິງ.

3.10. ນຳສະເໜີຫົວໜ້າ ອຊນສ ພິຈາລະນາ ອອກໃບຢັ້ງຢືນຮັບຮອງເອົາບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການລົງທຶນ;

3.11. ສະເໜີສ້າງຕັ້ງລະບົບການຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການລົງທຶນ ໂດຍມີການປະສານສົມທົບ ແລະແບ່ງງານຢ່າງຈະແຈ້ງ ກັບຂະແໜງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ກໍຄືຜູ້ພັດທະນາໂຄງການ;

3.12. ປະສານສົມທົບກັບ ຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອນຳສະເໜີຂັ້ນເທິງ ປະຕິບັດມາດຕະການໃນລະດັບຕ່າງໆ ໃນກໍລະນີ ທີ່ ຜູ້ພັດທະນາໂຄງການ ບໍ່ປະຕິບັດຕາມ ພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມທີ່ໄດ້ຮັບຮອງເອົາແລ້ວ;

3.13. ຄົ້ນຄວ້າ ສະເໜີຍ້ອງຍໍ/ປະຕິບັດວິໄນ ຕໍ່ບຸກຄົນ ຫຼື ນິຕິບຸກຄົນ ແລະ ການຈັດຕັ້ງທີ່ມີຜົນງານ/ກະທຳຄວາມຜິດ ໃນການຮັບປະກັນ ດ້ານສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການລົງທຶນ;

3.14. ຄຸ້ມຄອງ ແລະ ສະໜອງຂໍ້ມູນ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການລົງທຶນຕາມລະບຽບການ;

3.15. ພົວພັນຮ່ວມມື ກັບປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ ແລະ ຜູ້ພັດທະນາໂຄງການ ເພື່ອ ເຜີຍແຜ່ ກ່ຽວກັບຄວາມສຳຄັນຂອງວຽກງານປົກປັກຮັກສາສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການລົງທຶນ, ແນໃສ່ ຍາດແຍ່ງເອົາການສະໜັບສະໜູນ ທາງດ້ານທຶນຮອນ, ວິຊາການ ແລະ ບົດຮຽນ;

3.16. ຄຸ້ມຄອງ ແລະ ນຳໃຊ້ ຊັບສົມບັດສ່ວນລວມ, ອຸປະກອນ, ພາຫະນະ ທີ່ອົງການອະນຸມັດໃຫ້ຢ່າງມີປະສິດທິຜົນ;

3.17. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງ ຫົວໜ້າ ອຊນສ.

## ມາດຕາ 4. ຂອບເຂດສິດ

4.1 ສະເໜີ ສ້າງຕັ້ງ, ຍຸບເລີກ, ປັບປຸງກົງຈັກການຈັດຕັ້ງ, ແຕ່ງຕັ້ງ, ຍົກຍ້າຍ. ຍ້ອງຍໍ, ເລື່ອນຂັ້ນ, ເລື່ອນຊັ້ນ, ປົດຕຳແໜ່ງ, ປະຕິບັດວິໄນ ແລະ ປະຕິບັດນະໂຍບາຍອື່ນໆ ຕໍ່ພະນັກງານຂັ້ນຕ່າງໆທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງກົມ:

4.2 ອອກບົດແນະນຳ, ແຈ້ງການ, ຄຳສັ່ງ, ຂໍ້ຕົກລົງ ລະບຽບພາຍໃນ ແລະ ຮຽກໂຮມປະຊຸມຕ່າງໆພາຍໃນກອງ;

4.3 ສະເໜີ ວ່າຈ້າງພະນັກງານຕາມ ສັນຍາ ອີງຕາມຄວາມຮຽກຮ້ອງຕ້ອງການ ຂອງວຽກງານຕົວຈິງ;

4.4 ສະເໜີແຕ່ງຕັ້ງພະນັກງານພາຍໃນກອງ ໄປຮ່ວມປະຊຸມ, ສຳມະນາ, ຝຶກອົບຮົມ ທັດສະນະສຶກສາ ຢູ່ພາຍໃນ ແລະ ຕ່າງປະເທດ;

4.5 ປະຕິບັດ ສິດອື່ນໆ ຕາມການມອບໝາຍ ຂອງຫົວໜ້າ ອຊນສ.

# ໝວດທີ III
# ໂຄງປະກອບ ການຈັດຕັ້ງ

**ມາດຕາ 5. ໂຄງປະກອບ ກົງຈັກ**

ໂຄງປະກອບກົງຈັກ ຂອງກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ປະກອບມີ 2 ພະແນກ ແລະ 4 ສູນ ດັ່ງນີ້:

5.1 ພະແນກ ແຜນການ ແລະ ການເງິນ;

5.2 ພະແນກ ກົດໝາຍ ແລະ ຂໍ້ມູນຂ່າວສານ;

5.3 ສູນປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຂະແໜງພະລັງງານ (ສູນ ESIA ຂະແໜງພະລັງງານ);

5.4 ສູນປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຂະແໜງໂຄງລ່າງພື້ນຖານ ແລະ ໂຄງການລົງທຶນຂອງລັດ (ສູນ ESIA ຂະແໜງໂຄງລ່າງພື້ນຖານ ແລະ ໂຄງການລົງທຶນຂອງລັດ);

5.5 ສູນປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຂະແໜງກະສິກຳ -ປ່າໄມ້ (ສູນ ESIA ຂະແໜງກະສິກຳ-ປ່າໄມ້);

5.6 ສູນປະເມີນຜົນຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຂະແໜງ ບໍ່ແຮ່ ແລະ ອຸດສະຫະກຳ (ສູນ ESIA ຂະແໜງ ບໍ່ແຮ່ ແລະ ອຸດສະຫະກຳ);

**ມາດຕາ 6. ໂຄງປະກອບ ບຸກຄະລະກອນ**

6.1 ກປສສ ປະກອບດ້ວຍ ຫົວໜ້າ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງ ໂດຍ ນາຍົກລັດຖະມົນຕີ ຕາມການສະເໜີ ຂອງ ລັດຖະມົນຕີ ປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າ ອຊນສ ຕາມການເຫັນດີຂອງຄະນະຈັດຕັ້ງສູນກາງພັກ; ເປັນຜູ້ຮັບຜິດຊອບໂດຍກົງ ຕໍ່ ຫົວໜ້າ ອຊນສ ກ່ຽວກັບ ຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການຈັດຕັ້ງປະຕິບັດ ໜ້າທີ່, ຂອບເຂດສິດ ທີ່ໄດ້ກຳນົດໄວ້ ໃນມາດຕາ 3 ແລະ 4 ຂອງ ຂໍ້ຕົກລົງສະບັບນີ້. ໃນກໍລະນີ ຫົວໜ້າກອງ ໄປເຄື່ອນໄຫວວຽກງານທາງໄກ ຫຼື ຕິດຂັດວຽກງານ, ຫົວໜ້າກອງ ຈະຕ້ອງມອບສິດເປັນລາຍລັກອັກສອນໃຫ້ ຮອງຫົວໜ້າກອງ ທ່ານໃດທ່ານໜຶ່ງ ເປັນຜູ້ຮັກສາການແທນ;

6.2 ກປສສ ປະກອບດ້ວຍ ຮອງຫົວໜ້າ ກອງ ຈຳນວນໜຶ່ງ ຊຶ່ງ ໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງ ໂດຍລັດຖະມົນຕີ ປະຈຳສຳ ນັກງານນາຍົກ ລັດຖະມົນຕີ, ຫົວໜ້າ ອຊນສ ຕາມການສະເໜີ ຂອງ ຫົວໜ້າກອງ ແລະ ການເຫັນດີຂອງຄະນະຈັດຕັ້ງສູນກາງພັກ. ຮອງຫົວໜ້າກອງ ລົງເລິກຮັບຜິດຊອບ ວຽກງານໃດໜຶ່ງ ຕາມການມອບໝາຍ ຂອງ ຫົວໜ້າ ກອງ;.

6.3 ກປສສ ຍັງປະກອບມີ ຫົວໜ້າ ແລະ ຮອງຫົວໜ້າພະແນກ, ຫົວໜ້າ ແລະ ຮອງຫົວໜ້າສູນ, ຫົວໜ້າ ແລະ ຮອງຫົວໜ້າຂະແໜງໜ່ວຍງານ, ພະນັກງານ ວິຊາການ ແລະ ພະນັກງານ ບໍລິຫານຈຳນວນໜຶ່ງ ຕາມຕຳແໜ່ງງານທີ່ໄດ້ ກຳນົດໄວ້ ໃນໂຄງປະກອບ ການຈັດຕັ້ງ ຕາມມາດຕາ5 ຂອງ ຂໍ້ຕົກລົງສະບັບນີ້, ເຊິ່ງໄດ້ຮັບ ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍ ລັດຖະມົນຕີ ປະຈຳສຳນັກງານນາຍົກລັດຖະມົນຕີ, ຫົວໜ້າ ອຊນສ ຕາມການສະເໜີ ຂອງ ຫົວໜ້າ ກປສສ.

## ໝວດທີ IV
## ໜ້າທີ່ ຂອງແຕ່ລະພະແນກ

**ມາດຕາ 7: ໜ້າທີ່ຂອງພະແນກແຜນການ ແລະ ການເງິນ**

7.1 ສ້າງແຜນການ, ແຜນງົບປະມານ ແລະ ແຜນບຸກຄະລະກອນ ໃນແຕ່ລະໄລຍະ ພ້ອມທັງເອົາໃຈໃສ່ຄຸ້ມຄອງ, ຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ແລະ ລາຍງານຕໍ່ຂັ້ນເທິງ;

7.2 ເກັບ ແລະ ຄຸ້ມຄອງຄ່າທຳນຽມ, ຄ່າບໍລິການ ດ້ານສິ່ງແວດລ້ອມ-ສັງຄົມ ແລະ ປະຕິບັດພັນທະຕາມລະບຽບການ; ສ້າງແຜນການນຳໃຊ້ ລາຍຮັບວິຊາການ ໃນການເຄື່ອນໄຫວວຽກງານ ຂອງ ກປສສ ໃນແຕ່ລະໄລຍະ ແລ້ວນຳສະເໜີ ຂໍອະນຸມັດ ຕາມລະບຽບການ;

7.3 ຂຶ້ນແຜນກໍ່ສ້າງ, ບຳລຸງ ແລະ ຍົກລະດັບດ້ານວິຊາການ ໃນຂົງເຂດວຽກງານ ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຂອງບັນດາໂຄງການລົງທຶນ ໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ;

7.4 ຄຸ້ມຄອງ, ຈັດວາງ ແລະ ນຳໃຊ້ພະນັກງານ ວິຊາການ ພາຍໃນກອງ ຕາມຕຳແໜ່ງງານ ໃຫ້ເໝາະສົມກັບຄວາມຮູ້ ຄວາມສາມາດຂອງແຕ່ລະຄົນ ໂດຍສອດຄ່ອງກັບການຂະຫຍາຍຕົວຂອງວຽກງານໃນແຕ່ລະໄລຍະ;

7.5 ສະເໜີສ້າງຕັ້ງລະບົບການຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການລົງທຶນ ໂດຍມີການປະສານສົມທົບ ແລະ ແບ່ງງານຢ່າງຈະແຈ້ງ ກັບຂະແໜງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ກໍ່ຄືຜູ້ພັດທະນາໂຄງການ;

7.6 ຄຸ້ມຄອງ ແລະ ຮັກສາເອກະສານຂາເຂົ້າ-ຂາອອກ; ຮັບຜິດຊອບວຽກບໍລິຫານ ແລະ ພິທີການພາຍໃນກອງ;

7.7 ຄຸ້ມຄອງ ແລະ ນຳໃຊ້ ຊັບສົມບັດສ່ວນລວມ, ອຸປະກອນ, ພາຫະນະ ທີ່ອົງການອະນຸມັດໃຫ້ຢ່າງມີປະສິດທິຜົນ;

7.8 ພົວພັນຮ່ວມມື ກັບປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ ແລະ ຜູ້ພັດທະນາໂຄງການ ເພື່ອ ເຜີຍແຜ່ກ່ຽວກັບຄວາມສຳຄັນຂອງວຽກງານປົກປັກຮັກສາສິ່ງແວດລ້ອມ ແລະ ສັງຄົມຂອງ ໂຄງການລົງທຶນ, ແນໃສ່ ຍາດແຍ່ງເອົາການສະໜັບສະໜູນ ທາງດ້ານທຶນຮອນ, ວິຊາການ ແລະ ບົດຮຽນ;

7.9 ດຳເນີນການເຈລະຈາ ແລະ ເຊັນເອກະສານທາງການຕາມການມອບໝາຍຂອງຂັ້ນເທິງ;

7.10 ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງ ຫົວໜ້າ ກປສສ.

**ມາດຕາ 8: ພະແນກກົດໝາຍ ແລະ ຂໍ້ມູນຂ່າວສານ**

8.1 ຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ແລະ ບັນດານິຕິກຳ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ; ຜ່ານການຈັດຕັ້ງປະຕິບັດຕົວຈິງ, ຄົ້ນຄ້ວານຳສະເໜີຄຳເຫັນເພື່ອປັບປຸງບັນດານິຕິກຳທີ່ກ່ຽວຂ້ອງ;

8.2 ຈັດຕັ້ງການໂຄສະນາເຜີຍແຜ່, ຄົ້ນຄວ້າ ເຊື່ອມຊຶມ, ຝຶກອົບຮົມ ກ່ຽວກັບນິຕິກຳ ດ້ານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;

8.3 ຄົ້ນຄວ້າ ແລະ ນຳສະເໜີສ້າງຕັ້ງ ຄະນະຊ່ຽວຊານ ຫຼື ວ່າຈ້າງຊ່ຽວຊານ/ທີ່ປຶກສາ ຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອເຮັດໜ້າທີ່ ກວດຜ່ານ ແລະ ເຈລະຈາ ເອກະສານຊ້ອນທ້າຍວ່າດ້ວຍພັນທະທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງສັນຍາສຳປະທານ ຖ້າຈຳເປັນ;

8.4 ຄົ້ນຄວ້າ ສະເໜີຍ້ອງຍໍ/ປະຕິບັດວິໄນ ຕໍ່ບຸກຄົນ ຫຼື ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານ/ກະທຳຄວາມຜິດ ໃນການຮັບປະກັນ ດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການລົງທຶນ;

8.5 ປະສານສົມທົບ ກັບບັນດາຂະແໜງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການພົບປະເຈລະຈາ ກັບຜູ້ພັດທະນາໂຄງການ ໃນໄລຍະຕ່າງໆ ຂອງຂະບວນການອອກໃບຢັ້ງຢືນ, ເຈລະຈາສັນຍາສຳປະທານ ແລະ ເຊັນເອກະສານທາງການ ຕາມການມອບໝາຍ ຂອງຂັ້ນເທິງ;

8.6 ຄຸ້ມຄອງ ແລະ ສະໜອງຂໍ້ມູນ ກ່ຽວກັບການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການລົງທຶນຕາມລະບຽບການ;

8.7 ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງຫົວໜ້າ ກປສສ.

ມາດຕາ 9: ສູນ ESIA ຂະແໜງພະລັງງານ

9.1 ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ດຳເນີນງານຕາມຂັ້ນຕອນ ໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ກ້າວໄປເຖິງການຮັບຮອງເອົາ ບົດລາຍງານການປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະແຜນຄຸ້ມ ຄອງສິ່ງແວດລ້ອມ ແລະ ສັງຄົມ ຂອງບັນດາໂຄງການລົງທຶນ ຂະແໜງ ພະລັງງານ;

9.2 ຄົ້ນຄວ້າ ແລະ ນຳສະເໜີສ້າງຕັ້ງ ຄະນະຊ່ຽວຊານ ຫຼື ວ່າຈ້າງຊ່ຽວຊານ/ທີ່ປຶກສາ ຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອເຮັດໜ້າທີ່ ກວດຜ່ານບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການລົງທຶນ ຂະແໜງພະລັງງານຖ້າຈຳເປັນ;

9.3 ຄົ້ນຄວ້າ ແລະ ນຳສະເໜີສ້າງຕັ້ງ ຄະນະຊ່ຽວຊານ ເພື່ອເຮັດໜ້າທີ່ ກວດຜ່ານບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນຄຸ້ມຄອງ ສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການລົງທຶນ ຂະແໜງພະລັງງານຖ້າຈຳເປັນ;

9.4 ປະສານສົມທົບ ກັບບັນດາຂະແໜງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການພົບປະເຈລະຈາ ກັບຜູ້ພັດທະນາໂຄງການ ໃນໄລຍະຕ່າງໆ ຂອງຂະບວນການອອກໃບຢັ້ງຢືນສິ່ງແວດລ້ອມ ແລະ ສັງຄົມ;

9.5 ຄົ້ນຄວ້າສັງລວມ ໃຫ້ຫົວໜ້າກອງ ເພື່ອນຳສະເໜີຫົວໜ້າ ອຊນສ ພິຈາລະນາ ອອກໃບຢັ້ງຢືນຮັບຮອງເອົາບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການລົງທຶນ ຂະແໜງພະລັງງານ;

9.6 ຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການລົງທຶນ ຂະແໜງພະລັງງານ;

9.7 ປະສານສົມທົບກັບ ຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອນຳສະເໜີຂັ້ນເທິງ ປະຕິບັດມາດຕະການໃນລະດັບຕ່າງໆ ໃນກໍລະນີ ທີ່ຜູ້ພັດທະນາໂຄງການ ບໍ່ປະຕິບັດຕາມ ພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມທີ່ໄດ້ຮັບຮອງເອົາແລ້ວ;

9.8 ສັງລວມບົດລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ບົນພື້ນຖານບົດລາຍງານທີ່ໄດ້ຮັບຈາກຜູ້ພັດທະນາໂຄງການ, ໜ່ວຍງານຕິດຕາມກວດກາຂອງຂະແໜງການ ແລະ ທ້ອງຖິ່ນ ແລະ ການລົງຕິດຕາມກວດກາ ພາກສະໜາມຕົວຈິງ;

9.9 ດຳເນີນການເຈລະຈາ ແລະ ເຊັນເອກະສານທາງການຕາມການມອບໝາຍຂອງຂັ້ນເທິງ;

9.10 ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງຫົວໜ້າ ກປສສ.

## ມາດຕາ 10: ສູນ ESIA ຂະແໜງໂຄງລ່າງພື້ນຖານ ແລະ ໂຄງການລົງທຶນຂອງລັດ

10.1 ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ດຳເນີນງານຕາມຂັ້ນຕອນ ໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ກ້າວໄປເຖິງ ການຮັບຮອງເອົາບົດລາຍງານການປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຂະແໜງໂຄງລ່າງພື້ນຖານ ແລະ ໂຄງການລົງທຶນຂອງລັດ;

10.2 ຄົ້ນຄວ້າ ແລະ ນຳສະເໜີສ້າງຕັ້ງ ຄະນະຊ່ຽວຊານ ຫຼື ວ່າຈ້າງຊ່ຽວຊານ/ທີ່ປຶກສາ ຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອເຮັດໜ້າທີ່ ກວດຜ່ານບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຂະແໜງໂຄງລ່າງພື້ນຖານ ແລະ ໂຄງການລົງທຶນຂອງລັດ ຖ້າຈຳເປັນ;

10.3 ຄົ້ນຄວ້າ ແລະ ນຳສະເໜີສ້າງຕັ້ງຄະນະຊ່ຽວຊານ ເພື່ອເຮັດໜ້າທີ່ກວດຜ່ານ ບົດລາຍງານການ ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນຄຸ້ມຄອງສິ່ງແວດ ລ້ອມ ແລະ ສັງຄົມ ຂະແໜງໂຄງລ່າງພື້ນຖານ ແລະ ໂຄງການລົງທຶນຂອງລັດ ຖ້າຈຳເປັນ;

10.4 ປະສານສົມທົບ ກັບບັນດາຂະແໜງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການພົບປະເຈລະຈາກັບຜູ້ພັດທະນາໂຄງການໃນໄລຍະຕ່າງໆຂອງຂະບວນການອອກໃບຢັ້ງຢືນສິ່ງແວດ ລ້ອມ ແລະ ສັງຄົມ;

10.5 ຄົ້ນຄວ້າສັງລວມ ໃຫ້ຫົວໜ້າກອງ ເພື່ອນຳສະເໜີຫົວໜ້າ ອຊນສ ພິຈາລະນາ ອອກໃບຢັ້ງຢືນຮັບຮອງເອົາບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນຄຸ້ມ ຄອງສິ່ງແວດລ້ອມ ແລະ ສັງຄົມ ຂະແໜງໂຄງລ່າງພື້ນຖານ ແລະ ໂຄງການລົງທຶນຂອງລັດ;

10.6 ຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຂະແໜງໂຄງລ່າງພື້ນຖານ ແລະ ໂຄງການລົງທຶນຂອງລັດ

10.7 ປະສານສົມທົບກັບ ຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອນຳສະເໜີຂັ້ນເທິງ ປະຕິບັດ ມາດຕະການໃນລະດັບຕ່າງໆ ໃນກໍລະນີ ທີ່ຜູ້ພັດທະນາໂຄງການ ບໍ່ປະຕິບັດຕາມ ພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມທີ່ໄດ້ຮັບຮອງເອົາແລ້ວ;

10.8 ສ້າງບົດລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ບົນພື້ນຖານບົດລາຍງານທີ່ໄດ້ຮັບຈາກຜູ້ພັດທະນາໂຄງການ, ໜ່ວຍງານຕິດຕາມ ກວດກາຂອງຂະແໜງການ ແລະ ທ້ອງຖິ່ນ ແລະ ການລົງຕິດຕາມກວດກາພາກສະໜາມຕົວຈິງ;

10.9 ດຳເນີນການເຈລະຈາ ແລະ ເຊັນເອກະສານທາງການຕາມການມອບໝາຍຂອງຂັ້ນເທິງ;

10.10 ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງຫົວໜ້າ ກປສສ.

## ມາດຕາ 11: ສູນ ESIA ໃນຂະແໜງການກະສິກຳ-ປ່າໄມ້

11.1 ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ດຳເນີນງານຕາມຂັ້ນຕອນ ໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ກ້າວໄປເຖິງການຮັບຮອງເອົາບົດລາຍງານການປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນ ຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຂອງບັນດາໂຄງການຂະແໜງກະສິກຳ-ປ່າໄມ້;

11.2 ຄົ້ນຄ້ວາ ແລະ ນຳສະເໜີສ້າງຕັ້ງ ຄະນະຊ່ຽວຊານ ຫຼື ວ່າຈ້າງຊ່ຽວຊານ/ທີ່ປຶກສາ ຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອເຮັດໜ້າທີ່ ກວດຜ່ານບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການລົງທຶນ ຂະແໜງກະສິກຳ-ປ່າໄມ້ຖ້າຈຳເປັນ;

11.3 ຄົ້ນຄ້ວາ ແລະ ນຳສະເໜີສ້າງຕັ້ງ ຄະນະຊ່ຽວຊານ ເພື່ອເຮັດໜ້າທີ່ ກວດຜ່ານ ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການລົງທຶນ ຂະແໜງ ກະສິກຳ- ປ່າໄມ້ ຖ້າຈຳເປັນ;

11.4 ປະສານສົມທົບ ກັບບັນດາຂະແໜງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການພົບປະເຈລະຈາກັບຜູ້ພັດທະນາໂຄງການໃນໄລຍະຕ່າງໆຂອງຂະບວນການອອກໃບຢັ້ງຢືນສິ່ງແວດລ້ອມ ແລະ ສັງຄົມ;

11.5 ຄົ້ນຄ້ວາສັງລວມ ໃຫ້ຫົວໜ້າກອງ ເພື່ອນຳສະເໜີຫົວໜ້າ ອຊນສ ພິຈາລະນາ ອອກໃບຢັ້ງຢືນຮັບຮອງເອົາບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນຄຸ້ມ ຄອງສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການລົງທຶນ ຂະແໜງ ກະສິກຳ - ປ່າໄມ້;

11.6 ຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການລົງທຶນ ຂະແໜງກະສິກຳ-ປ່າໄມ້;

11.7 ປະສານສົມທົບກັບ ຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອນຳສະເໜີຂັ້ນເທິງປະຕິບັດ ມາດຕະການໃນລະດັບຕ່າງໆ ໃນກໍລະນີ ທີ່ຜູ້ພັດທະນາໂຄງການ ບໍ່ປະຕິບັດຕາມ ພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມທີ່ໄດ້ຮັບຮອງເອົາແລ້ວ;

11.8 ສ້າງບົດລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ບົນພື້ນຖານບົດລາຍງານທີ່ໄດ້ຮັບຈາກຜູ້ພັດທະນາໂຄງການ, ໜ່ວຍງານ

ຕິດຕາມ ກວດກາຂອງຂະແໜງການ ແລະ ທ້ອງຖິ່ນ ແລະ ການລົງຕິດຕາມກວດກາ ພາກສະໜາມຕົວຈິງ;

11.9 ດຳເນີນການເຈລະຈາ ແລະ ເຊັນເອກະສານທາງການຕາມການມອບໝາຍຂອງຂັ້ນເທິງ;

11.10 ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຫົວໜ້າ ກປສສ.

ມາດຕາ 12: ສູນ ESIA ໃນຂະແໜງການ ບໍ່ແຮ່ ແລະ ອຸດສະຫະກຳ

12.1 ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ດຳເນີນງານ ຕາມຂັ້ນຕອນ ໃນຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ກ້າວໄປ ເຖິງການຮັບຮອງເອົາບົດລາຍງານການປະເມີນຜົນກະທົບ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຂອງບັນດາໂຄງການຂະແໜງບໍ່ແຮ່- ອຸດສະ ຫະກຳ;

12.2 ຄົ້ນຄ້ວາ ແລະ ນຳສະເໜີສ້າງຕັ້ງ ຄະນະຊ່ຽວຊານ ຫຼື ວ່າຈ້າງຊ່ຽວຊານ/ທີ່ປຶກສາ ຢູ່ພາຍ ໃນ ແລະ ຕ່າງປະເທດ ເພື່ອເຮັດໜ້າທີ່ ກວດຜ່ານບົດລາຍງານ ການປະເມີນຜົນກະທົບຕໍ່ ສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການ ລົງທຶນ ຂະແໜງບໍ່ແຮ່-ອຸດສະຫະກຳ ຖ້າຈຳເປັນ;

12.3 ຄົ້ນຄ້ວາ ແລະ ນຳສະເໜີສ້າງຕັ້ງ ຄະນະຊ່ຽວຊານ ເພື່ອເຮັດໜ້າທີ່ ກວດຜ່ານ ບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການລົງທຶນ ຂະແໜງບໍ່ແຮ່-ອຸດສະຫະກຳ ຖ້າຈຳເປັນ;

12.4 ປະສານສົມທົບ ກັບບັນດາຂະແໜງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການພົບປະ ເຈລະຈາກັບຜູ້ພັດທະນາໂຄງການ ໃນໄລຍະຕ່າງໆ ຂອງຂະບວນການອອກໃບຢັ້ງຢືນ ສິ່ງແວດລ້ອມ ແລະ ສັງຄົມ;

12.5 ຄົ້ນຄ້ວາສັງລວມ ໃຫ້ຫົວໜ້າກອງ ເພື່ອນຳສະເໜີຫົວໜ້າອຊນສ ພິຈາລະນາອອກໃບຢັ້ງຢືນ ຮັບຮອງເອົາບົດລາຍງານ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ແຜນ ຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ຂອງໂຄງການລົງທຶນ ຂະແໜງບໍ່ແຮ່- ອຸດສະຫະ ກຳ;

12.6 ຕິດຕາມກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມຂອງໂຄງການລົງທຶນ ຂະແໜງບໍ່ແຮ່-ອຸດສະຫະກຳ;

12.7 ປະສານສົມທົບກັບ ຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອນຳສະເໜີຂັ້ນເທິງ ປະຕິບັດ ມາດຕະການໃນລະດັບຕ່າງໆ ໃນກໍລະນີ ທີ່ຜູ້ພັດທະນາໂຄງການ ບໍ່ປະຕິບັດຕາມ ພັນ ທະດ້ານສິ່ງແວດລ້ອມ ແລະ ສັງຄົມທີ່ໄດ້ຮັບຮອງເອົາແລ້ວ;

12.8 ສ້າງບົດລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ ບົນພື້ນຖານບົດລາຍງານທີ່ໄດ້ຮັບຈາກຜູ້ພັດທະນາໂຄງການ, ໜ່ວຍງານຕິດ ຕາມກວດກາ ຂອງຂະແໜງການ ແລະ ທ້ອງຖິ່ນ ແລະ ການລົງຕິດຕາມກວດກາ ພາກສະ ໜາມຕົວຈິງ;

12.9 ດຳເນີນການເຈລະຈາ ແລະ ເຊັນເອກະສານທາງການຕາມການມອບໝາຍຂອງຂັ້ນເທິງ;

12.10 ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງຫົວໜ້າ ກປສສ.

# ໝວດທີ່ V

## ລະບອບແບບແຜນວິທີເຮັດວຽກ

**ມາດຕາ 13 ແບບແຜນວິທີເຮັດວຽກ**

ກປສສ ເຄື່ອນໄຫວ ແລະ ດຳເນີນງານ ຕາມຫຼັກການດັ່ງນີ້:

13.1 ປະຕິບັດ ຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ, ປະຕິບັດລະບອບທິວໜ້າດຽວ, ເສີມຂະຫຍາຍທັດສະນະຄົດປະດິດສ້າງ ກ່ຽວກັບ ວຽກງານ ຄຸ້ມຄອງ, ຕິດຕາມ ກວດກາ ສິ່ງແວດລ້ອມ ແລະ ສັງຄົມ;

13.2 ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ. ປະສານສົມທົບຢ່າງແໜ້ນແຟ້ນ ກັບອົງການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ, ບັນດາຂະແໜງການຕ່າງໆ ທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ;

13.3 ເຮັດວຽກມີການກວດກາ ຕິດຕາມຊຸກຍູ້, ສະຫຼຸບ ຖອດຖອນບົດຮຽນ, ຕີລາຄາ ຜົນໄດ້ຜົນເສຍ, ພ້ອມທັງປະຕິບັດລະບອບລາຍງານ ສ່ອງແສງຢ່າງເຂັ້ມງວດ.

13.4 ປະຕິບັດລະບອບປະຊຸມປະຈຳເດືອນ, 3 ເດືອນ, 6 ເດືອນ ຫຼື ປະຈຳປີ ແລະ ປະຕິບັດລະບອບລາຍງານໃຫ້ຂັ້ນເທິງຂອງຕົນເປັນປົກກະຕິ.

# ໝວດທີ່ VI

## ບົດບັນຍັດສຸດທ້າຍ

**ມາດຕາ 14. ງົບປະມານ ແລະ ພາຫະນະ**

ກອງ ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ມີ ເຄື່ອງໝາຍ, ງົບປະມານ ແລະ ພາຫະນະ ສະເພາະ ເພື່ອຮັບໃຊ້ ໃຫ້ແກ່ ການເຄື່ອນໄຫວ ວຽກງານ ທາງລັດຖະການ ຂອງ " ກປສສ ".

**ມາດຕາ 15. ການຈັດຕັ້ງປະຕິບັດ**

ຫ້ອງການ, ກົມ, ກອງເລຂາ, ສະຖາບັນ, ອ້ອມຂ້າງ ອຊບສ ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງ ຂອງ ລັດຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຕາມ ຂໍ້ຕົກລົງ ສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 16. ຜົນສັກສິດ**

ຂໍ້ຕົກລົງ ສະບັບນີ້ ມີ ຜົນສັກສິດ ນັບແຕ່ມື້ ລົງລາຍເຊັນ ເປັນຕົ້ນໄປ, ເອກະສານເດີມໆ ໃນເມື່ອກ່ອນ ທີ່ ຂັດກັບ ຂໍ້ຕົກລົງ ສະບັບນີ້ ລ້ວນແຕ່ ຖືກລົບລ້າງ.

ລັດຖະມົນຕີ ປະຈຳສຳນັກງານນາຍົກລັດຖະມົນຕີ,

ຫົວໜ້າ ອົງການ ຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ



ໂຄງຮ່າງການຈັດຕັ້ງ

ກອງ ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ

